# ສິດຂອງທ່ານພາຍໃຕ້ມາດຕາ (Title) VI ຂອງກົດໝາຍວ່າດ້ວຍສິດພົລເມືອງ ປີ1964

ມາດຕາ (Title) VI ຂອງກົດໝາຍວ່າດ້ວຍສິດທິພົລເມືອງປີ 1964 ກຳໜົດໄວ້ວ່າ ບໍ່ມີຜູ້ໃດຢູ່ໃນສະຫະລັດ ໂດຍອີງໃສ່ພື້ນຖານດ້ານຊົນຊາດ, ສີຜີວ ຫລືຊາດກຳເໜີດ ຕ້ອງຖືກແບ່ງແຍກ, ຖືກປະຕິເສດບໍ່ໃຫ້ໄດ້ຮັບຜົນປະໂຫຍດ ຫລື ຕ້ອງຖືກຈຳແນກຫຢູ່ພາຍໃຕ້ໂຄງການຫລືກິດຈະກຳທີ່ໄດ້ຮັບເງີນຊ່ວຍເຫລືອຈາກລັດຖະບານກາງ. ຄຳສັ່ງບໍລິຫານຂອງປະທານາທິບໍດີ (Presidential Executive Order) ເລກທີ 12896 ລະບຸບອກວ່າຕ້ອງໃຫ້ຄວາມຍຸດຕິທຳທາງດ້ານສະພາບແວດລ້ອມໃຫ້ໝູ່ປະຊາຊົນຂອງຊົນເຜົ່າສ່ວນນ້ອຍ ແລະ ມີລາຍໄດ້ຕ່ຳ. ຄຳສັ່ງບໍລິຫານຂອງປະທານາທິບໍດີ (Presidential Executive Order) ເລກທີ 13166 ລະບຸບອກວ່າຕ້ອງໃຫ້ການບໍລິການແກ່ບຸກຄົນທີ່ມີລະດັບຄວາມສາມາດດ້ານການໃຊ້ພາສາອັງກິດຈຳກັດ.

ຜູ້ໃດກໍ່ຕາມທີ່ເຊື່ອວ່າພວກຕົນຖືກແບ່ງແຍກ, ຖືກປະຕິເສດບໍ່ໃຫ້ໄດ້ຮັບຜົນປະໂຫຍດ ຫລື ໄດ້ຖືກຈຳແນກ ສາມາດຂຽນຄຳຟ້ອງຮ້ອງສົ່ງໄປຍັງຫ້ອງການຂອງເຂດເມືອງວ່າດ້ວຍສິດທິພົລເມືອງດ້ານການຂົນສົ່ງຕໍ່ຢ່າງໄວຂອງເຂດອ່າວຊານຟຣານຊິສໂກ (San Francisco Bay Area Rapid Transit District's Office of Civil Rights). ກົດໝາຍຂອງລັດຖະບານກາງ ແລະ ຂອງລັດ ກຳໜົດວ່າ ຄຳຟ້ອງຮ້ອງຕ້ອງຂຽນພາຍໃນ ນຶ່ງຮ້ອຍແປດສິບ (180) ວັນຕາມປະຕິທິນພາຍຫລັງທີ່ມີເຫດການທີ່ຖືກກ່າວຫານັ້ນເກີດຂຶ້ນ. ເພື່ອຂໍເອົາຂໍ້ມູນເພີ້ມເຕີມກ່ຽວກັບ ຂໍ້ບັງຄັບທີ່ບໍ່ໃຫ້ມີ ການຈຳແນກຂອງ BART ຫລື ເພື່ອປະກອບຄຳຟ້ອງຮ້ອງເລື້ອງທີ່ກ່ຽວຂ້ອງກັບມາດຕາ (Title) VI ກະລຸນາສົ່ງຄຳຮ້ອງໄປທີ່:

**San Francisco Bay Area Rapid Transit District (BART)**
**ATTN: Office of Civil Rights**
**2150 Webster Street, Suite #0414**
**Oakland, CA 94612**
**(510)874-7333 Fax (510) 464-7587**
**officeofcivilrights@bart.gov**

ແບບຟອມຄຳຟ້ອງຮ້ອງຍັງສາມາດຊອກຫາເອົາໄດ້ທີ່ເວັບໄຊຂອງ BART's ທ່ ີ

**www.bart.gov/titlevi**

**Title VI is the Law**

BART

Rev. 06/2022